# Fiscal Employer Agencies (ໜ່ວຍງານນາຍຈ້າງດ້ານການເງິນ, FEA) ສໍາລັບ IRIS: ຕາຕະລາງເວລາ ແລະ Electronic Visit Verification (ການຢັ້ງຢືນການເຂົ້າພົບທາງເອເລັກໂຕນິກ, EVV)

(IRIS Fiscal Employer Agencies (FEAs): Timesheets and Electronic Visit Verification (EVV))

ການຮູ້ວ່າ FEA ແຕ່ລະແຫ່ງສະໜັບສະໜູນພະນັກງານຂອງທ່ານຄືແນວໃດ ສາມາດຊ່ວຍທ່ານເລືອກວ່າ FEA ແຫ່ງໃດເໝາະກັບທ່ານທີ່ສຸດ. FEA ແຕ່ລະແຫ່ງຈັດການຕາຕະລາງເວລາ ແລະ Electronic Visit Verification (ການຢັ້ງຢືນການເຂົ້າພົບທາງເອເລັກໂຕນິກ, EVV) ແບບຕ່າງກັນໄປ.

## ການສົ່ງຕາຕະລາງເວລາ

ຖ້າທ່ານລົງທະບຽນເຂົ້າໃນໂຄງການ IRIS (Include, Respect, I Self-Direct (ລວມເຂົ້າ, ເຄົາລົບ, ຂ້ອຍກໍາກັບເອງ)), ທ່ານອາດຈະຕ້ອງການວ່າຈ້າງພະນັກງານຂອງທ່ານເອງ ແລະ ກາຍເປັນນາຍຈ້າງຂອງພວກເຂົາ.

ໃນຖານະນາຍຈ້າງ, ຄວາມຮັບຜິດຊອບປະການໜຶ່ງຂອງທ່ານກໍຄືການໃຫ້ການອະນຸມັດແກ່ຕາຕະລາງເວລາ ຂອງພະນັກງານຂອງທ່ານ ແລະ ສົ່ງໄປໃຫ້ໃຫ້ FEA ຂອງທ່ານ.

ບັນດາ FEA ສໍາລັບ IRIS ມີທາງເລືອກທີ່ແຕກຕ່າງກັນສໍາລັບການສົ່ງຕາຕະລາງເວລາ ເຊັ່ນ:

- ການສົ່ງທາງເອເລັກໂຕນິກໂດຍໃຊ້ web-based portal (ປະຕູທາງເວັບໄຊ) ຫຼື ແອັບພລິເຄຊັນມືຖື.
- ຕາຕະລາງເວລາແບບເປັນເອກະສານທີ່ສາມາດສົ່ງທາງໄປສະນີ, ແຟັກ ຫຼື ສົ່ງອີເມວໄດ້.

### ວິທີການສົ່ງຕາຕະລາງເວລາສໍາລັບ FEA ແຕ່ລະແຫ່ງ

| FEA | ຕາຕະລາງເວລາແບບເປັນເອກະສານ | Web-Based Portal (ປະຕູທາງເວັບໄຊ) ຫຼື ແອັບພລິເຄຊັນມືຖື |
|---|---|---|
| GT Independence | ບໍ່ | ແມ່ນ |
| iLIFE | ແມ່ນ | ແມ່ນ |
| Premier | ບໍ່ | ແມ່ນ |

WISCONSIN DEPARTMENT of HEALTH SERVICES

# Electronic Visit Verification
# (ການຢັ້ງຢືນການເຂົ້າພົບທາງເອເລັກໂຕນິກ, EVV)

ພະນັກງານຂອງທ່ານຈຳເປັນຕ້ອງໃຊ້ EVV ຖ້າທ່ານລົງທະບຽນເຂົ້າໃນໂຄງການ IRIS ແລະ ໄດ້ຮັບການເບິ່ງແຍງ
ດູແລສ່ວນຕົວແບບກຳກັບເອງ ຫຼື
ການບໍລິການເບິ່ງແຍງດູແລໃນເຮືອນແບບມີການສະໜັບສະໜູນຈາກພະນັກງານ
ທີ່ທ່ານໄດ້ວ່າຈ້າງ ແຕ່ບໍ່ໄດ້ກິນຢູ່ນຳທ່ານ. ຖ້າທ່ານມີປະເພດພະນັກງານເຫຼົ່ານີ້, ທ່ານຈຳເປັນຕ້ອງໄດ້ກວດໃຫ້ແນ່
ໃຈວ່າພະນັກງານແຕ່ລະຄົນໄດ້ໃຊ້ EVV ໃນລະຫວ່າງການເຂົ້າພົບແຕ່ລະຄັ້ງ. EVV ແມ່ນຂໍ້ກຳນົດຂອງ
ລັດຖະບານກາງ.

**ຫຼັກການເຮັດວຽກຂອງ EVV:** ເມື່ອພະນັກງານມາຮອດ ແລະ ສິ້ນສຸດການບໍລິການຂອງຕົນ, ພວກເຂົາຕ້ອງໄດ້ປ້ອນ
ລາຍລະອຽດການເຂົ້າພົບ. ເພື່ອເຮັດສິ່ງນີ້, ພວກເຂົາຈະໃຊ້:

- ແອັບຢູ່ໃນໂທລະສັບສະມາດໂຟນ ຫຼື ແທັບເລັດຂອງຕົນ.
- ອຸປະກອນດິຈິຕອນຂະໜາດນ້ອຍທີ່ເອີ້ນວ່າ ອຸປະກອນຄົງທີ່.
- ໂທລະສັບຕັ້ງໂຕະຂອງທ່ານ.

FEA ສຳລັບ IRIS ແຕ່ລະແຫ່ງ ມີລະບົບ EVV ທີ່ແຕກຕ່າງກັນໄປ. ລະບົບ EVV ແຕ່ລະລະບົບຈະຊ່ວຍ
ໃຫ້ໃຫ້ຜູ້ອອກແຮງງານສາມາດປ້ອນລາຍລະອຽດການເຂົ້າພົບໄດ້ດ້ວຍວິທີການທີ່ແຕກຕ່າງກັນໄປ
.

### ວິທີການ EVV ຕ່າງໆສຳລັບ FEA ແຕ່ລະແຫ່ງ

| FEA | ແອັບມືຖື | ໂທລະສັບ (ໃຊ້ໂທລະສັບຕັ້ງໂຕະຂອງທ່ານ) | ອຸປະກອນຄົງທີ່ |
|---|---|---|---|
| **GT Independence** | ແມ່ນ | ບໍ່ | ບໍ່ |
| **iLIFE** | ແມ່ນ | ແມ່ນ | ແມ່ນ |
| **Premier** | ແມ່ນ | ແມ່ນ | ແມ່ນ |

# ຂໍ້ມູນເພີ່ມເຕີມກ່ຽວກັບ EVV ສຳລັບ IRIS

- dhs.wi.gov/evv/iris-evv.htm

- [www.medicaid.gov/medicaid/home-community-based-services/guidance/electronic-visit-verification-evv/index.html](www.medicaid.gov/medicaid/home-community-based-services/guidance/electronic-visit-verification-evv/index.html)